ຮຽນ ພໍ່ແມ່ຜູ້ປົກຄອງ,

ຂອບໃຈສຳລັບຄວາມຕັ້ງໃຈອັນດີຂອງທ່ານໃນການປະກອບ *ຟອມສຳຫຼວດຜົນໄດ້ຮັບຂອງ ຄອບຄົວ* ໃນແຜນການແຊກແຊງຊ່ວຍເຫຼືອເດັກທາຮົກ ແລະ ເດັກນ້ອຍ. ກະຊວງສຶກສາທິການແຫ່ງ ຮັຖມິນນີໂຊຕາມຸ່ງໝັ້ນໃນການຮັບປະກັນວ່າ ການບໍລິການ ແລະ ການສະໜັບສະໜູນທີ່ຈັດຫາໃຫ້ຜ່ານ ໂຄງການ Help Me Grow (ໂຄງການຊ່ວຍໃຫ້ລູກເຕີບໃຫຍ່) ນັ້ນແມ່ນມີຄຸນນະພາບສູງ. ຄວາມຄິດເຫັນຂອງທ່ານ ສຳຄັນຕໍ່ພວກເຮົາ.

ໃນຂໍ້ຄວາມໃນແບບສຳຫຼວດແຕ່ລະຂໍ້ນັ້ນ, ກະຮຸນາເລືອກຂໍ້ທີ່ບັນຍາຍເຖິງລັກສະນະຄອບຄົວຂອງທ່ານໄດ້ດີທີ່ສຸດໃນປັດຈຸບັນນີ້ຊື່ງໄດ້ແກ່: ບໍ່ແມ່ນເລີຍ, ເລັກນ້ອຍ, ບາງສ່ວນ, ເກືອບທັງໝົດ ຫຼືທັງໝົດເລີຍ. ກະຮຸນາຕອບຄຳຖາມທັງສອງດ້ານຂອງແບບສຳຫຼວດ. ຈາກນັ້ນ ໃຫ້ເອົາແບບສຳຫຼວດໃສ່ ໃນຊອງທີ່ຈັດຕຽມໄວ້ໃຫ້ ແລະ ສົ່ງກັບຄືນໄປທີ່:

Minnesota Help Me Grow Family Outcome Survey
Minnesota Department of Education
1500 Highway 36 West
Roseville, MN  55113

ຄຳຕອບຂອງທ່ານຈະຖືກເກັບເປັນຄວາມລັບເປັນຢ່າງດີ ໂດຍກະຊວງສຶກສາທິການຂອງຮັຖມິນນີໂຊຕາ. ເລກປະຈຳຕົວຂອງລູກຫຼານທ່ານທີ່ຢູ່ໃນແບບສຳຫຼວດ ຈະຊ່ວຍໃຫ້ພວກເຮົາສາມາດ ເຊື່ອມໂຍງຄຳຕອບ ຂອງທ່ານກັບຄຳຕອບຈາກພໍ່ແມ່ຄົນອື່ນໆ ຈາກໂຮງຮຽນໃນເຂດການສຶກສາ ແລະ ຈາກຮັຖຂອງທ່ານ. ຂໍ້ມູນຈະຖືກນຳໃຊ້ເພື່ອວັດແທກຄຸນນະພາບຂອງໂຄງການ ແລະ ການບໍລິການຕ່າງໆ

ໃນຖານະເປັນແຫຼ່ງຊັບພະຍາກອນສຳຄັນໃນການສ້າງໂຄງການຕ່າງໆ ໃຫ້ດີຍິ່ງຂຶ້ນ.

ຖ້າຫາກທ່ານມີຄຳຖາມກ່ຽວກັບແບບສຳຫຼວດຜົນໄດ້ຮັບຂອງຄອບຄົວ, ກະຣຸນາໂທຣໄປທີ່ ພະແນກດູແລການບໍລິການດ້ານການຮຽນຮູ້ແຕ່ຫົວທີ (Division of Early Learning Services) ທີ່ເລກໂທຣ 651-582-8484 ຫຼືສົ່ງອີເມລໄປທີ່ mde-els@state.mn.us. ພວກເຮົາເຫັນຄຸນຄ່າຄວາມຄິດເຫັນຂອງທ່ານ.